# ບົດຂ່າວ
## ພິທີມອບ-ຮັບໜ້າທີ່ຜູ້ອຳນວຍການ ທຄຕລ

ເວລາ 15:30 ໂມງ ຂອງວັນທີ 14/06/2021 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດພິທີມອບ-ຮັບໜ້າທີ່ຜູ້ອຳນວຍການຂອງ ທຄຕລ, ເປັນກຽດເຂົ້າຮ່ວມພິທີໂດຍ ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ທ່ານ ບຸນເຫຼືອ ສິນໄຊວໍລະວົງ ຮອງລັດຖະມົນຕີກະຊວງການເງິນ-ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍ ຄະນະກົມທີ່ກ່ຽວຂ້ອງຈາກ ທຫລ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ທຄຕລ, ຄະນະພະແນກ-ສູນ ທຄຕລ ພ້ອມດ້ວຍແຂກທີ່ຖືກເຊີນຈຳນວນໜຶ່ງເຂົ້າຮ່ວມ, ນອກນັ້ນກໍ່ຍັງມີບັນດາຄະນະສາຂາ ທຄຕລ ທົ່ວລະບົບ ທີ່ເຂົ້າຮ່ວມພິທີຜ່ານລະບົບອອນລາຍ Zoom ອີກດ້ວຍ.

ໃນພິທີໄດ້ປະກາດຂໍ້ຕົກລົງ:

1. ຍົກຍ້າຍ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄປຮັບໜ້າທີ່ໃໝ່ຢູ່ ທະນາຄານແຫ່ງ ສປປ ລາວ;
2. ແຕ່ງຕັ້ງ ທ່ານ ຄຳພຸດ ສິດທິລາດ ເປັນຜູ້ອຳນວຍການ ທຄຕລ ນັບແຕ່ວັນທີ 15/06/2021;



(ເຊັນມອບຮັບ-ໜ້າທີ່ ລະຫວ່າງ ຜູ້ອຳນວຍການ ທຄຕລ ຜູ້ເກົ່າ ແລະ ຜູ້ໃໝ່)



(ທ່ານ ພູຂົງ ຈັນທະຈັກ ລາຍງານການປະຕິບັດວຽກງານໄລຍະຜ່ານມາ ແລະ ກ່າວມອບໜ້າທີ່)



(ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ໃຫ້ຄຳໂອວາດ)



(ທ່ານ ຄຳພຸດ ສິດທິລາດ, ຜູ້ອຳນວຍການ ທຄຕລ ກ່າວຮັບຄຳໂອວາດ)